ສໍານັກງານໃຫຍ່

ເລກທີ: 3558 /ທຄຕລ 2023

ນະຄອນຫຼວງວຽງຈັນ, ວັນທີ: 18 SEP 2023

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ໂຮງພິມພາກລັດ ແລະ ເອກະຊົນ ຢູ່ພາຍໃນ ສປປ ລາວ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ຜະລິດປະຕິທິນ ປະຈໍາປີ 2024.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາ ໂຮງພິມພາກລັດ ແລະ ເອກະຊົນ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນລາຄາປະຕິທິນ ທຄຕລ ປະຈໍາປີ 2024 ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຄຸນລັກສະນະ |
|---|---|---|
| 1 | **ປະຕິທິນ ແຂວນຝາ:**<br>**ຈໍານວນ 35.000 ອັນ** | • ຂະໜາດ: 40*60 ຊມ (2 ເດືອນ/ໜ້າ).<br>• ນໍ້າໜັກເຈ້ຍ 160 ແກຼມ.<br>• ພິມ 4 ສີ: ພິມ 1 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>• ໃສ່ເຫຼັກໜີບສີທອງ ເທິງຫົວປະຕິທິນແຂວນຝາ.<br>• ການຫຸ້ມຫໍ່ປະຕິທິນ: ຖົງຢາງໃສ, 50 ອັນ/ແກັດ |
| 2 | **ປະຕິທິນຕັ້ງໂຕະ:**<br>**ຈໍານວນ 35.000 ອັນ** | • ຂະໜາດ: 15*21*9 cm (2 ເດືອນ/ໜ້າ)<br>• ນໍ້າໜັກເຈ້ຍ 160 ແກຼມ; ຂາຕັ້ງ 1.200 ແກຼມ<br>• ພິມ 4 ສີ: ພິມ 2 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>• ໃສ່ຫ່ວງດູກງູເຫຼັກເບົາເຕັມຫົວ (ສີຂາວ).<br>• ການຫຸ້ມຫໍ່ປະຕິທິນ: ຊອງເຈ້ຍສີຂາວ.<br>• 100 ອັນ/ແກັດ. |

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

**ເອກະສານຊອງທີ 1 (ບໍ່ປິດຊອງ):**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດໂຮງພິມ (ຜະລິດພາຍໃນປະເທດ) ແລະ ດໍາເນີນທຸລະກິດຢ່າງໜ້ອຍ 2 ປີຂຶ້ນໄປ ແລະ ໃຫ້ສໍາເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດໍາເນີນທຸລະກິດປະຈໍາປີ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ 2021 ແລະ ເອກະສານກ່ຽວກັບຜົນງານການຜະລິດປະຕິທິນ ຜ່ານມາ.
2. ຕົວຢ່າງປະຕິທິນຢ່າງລະ 1 ແຜ່ນ, ພ້ອມທັງກໍານົດລາຍລະອຽດຕາມສະເປັກຂ້າງເທິງ (ຕາມ Format ຄັດຕິດມາພ້ອມນີ້)

3. ຜູ້ສະໜອງສາມາດມາເບິ່ງຕົວຢ່າງສິນຄ້າໄດ້ນັບຈາກວັນນີ້ເປັນຕົ້ນໄປ ທີ່ ພະແນກຫ້ອງການບໍລິຫານ-ການເງິນ, ສໍານັກງານໃຫຍ່ ທຄຕລ, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.

4. ສາມາດຍື່ນເອກະສານຂ້າງເທິງໄດ້ ແລະ ນັບຈາກວັນນີ້ຈົນເຖິງ ວັນພຸດ ວັນທີ 27/09/2023 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍສະແກນເປັນ PDF ເຂົ້າມາທີ່ Email: procurement@bcel.com.la

**ເອກະສານຊອງທີ 2 (ປິດຊອງ)**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າມາຮ່ວມໃນວັນພຸດ, ທີ **04/10/2023 ເວລາ 09:00** ໂມງ ສະນັ້ນ ບັນດາໂຮງພິມຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ຕຶກ C ສໍານັກງານໃຫຍ່ ທຄຕລ.
2. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ ພ້ອມທັງລະບຸມື້ໝົດກໍານົດເວລາໃນໃບສະເໜີລາຄາດັ່ງກ່າວ) Expire date) ຢ່າງໜ້ອຍ 20ວັນລັດຖະການ.
3. ບໍລິສັດຜູ້ສະໜອງຕ້ອງກໍານົດສະເປັກ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງ ຂອງ ທຄຕລ ການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 03/11/2023)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

**ໝາຍເຫດ**:

1. ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ, ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).
2. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ.
3. ການຊໍາລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

## V. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດປະຕິທິນຕົວຈິງ 01 ຊຸດ ມາຜ່ານຕາມ Artwork ທີ່ ທຄຕລ ກໍານົດພາຍໃນ 07 ວັນ ພ້ອມກັນນັ້ນ ຜູ້ສະໜອງຈະໄດ້ ນໍາໄປຜ່ານກະຊວງຖະແຫຼງຂ່າວ ແລະ ວັດທະນະທໍາ ແລະ ຕ້ອງມີຄວາມສາມາດຈັດພິມຈໍານວນທັງໝົດສໍາເລັດພາຍໃນ 30 ວັນນັບຈາກມື້ຮອງຮັບແບບ.

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ແຫ່ງ ສປປ ລາວ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ນະຄອນ ຫລວງ ວຽງຈັນ

ທ. ສາຍສະໝອນ ຈັນທະຈັກ

ຕິດຕໍ່ພົວພັນ:

ຂະແໜງສະໜອງວັດຖຸເຕັກນິກ
021 213200 ຕໍ່ 414 ( ໂມງລັດຖະການ )

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ …………/ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະແຈ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ:


2024
60 cm
40 cm


2024
21 cm
9 cm
15 cm